# ກອງທຶນປົກປັກຮັກສາສິ່ງແວດລ້ອມ
# Environment Protection Fund

ກັນຍາ
2018

## ວິໄສທັດ ຮອດປີ 2030
## ຍຸດທະສາດ ຮອດປີ 2025

VISION
2030

MISSION
2025

ກປສ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ກອງທຶນປົກປັກຮັກສາສິ່ງແວດລ້ອມ
# ສະພາບໍລິຫານ

# ວິໄສທັດ ຮອດປີ 2030
# ຍຸດທະສາດ ຮອດປີ 2025
# ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ

ນະຄອນຫຼວງວຽງຈັນ, ກັນຍາ, 2018

# ຄຳນຳ



ເພື່ອຈັດຕັ້ງປະຕິບັດ ວິໄສທັດ ຮອດປີ 2030 ແລະ ຍຸດທະສາດ ຮອດປີ 2025 ດ້ານການພັດທະນາດ້ານເສດຖະກິດ-ສັງຄົມແຫ່ງຊາດ ແລະ ດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລວມທັງຂະແໜງການອື່ນໆ ທີ່ກ່ຽວຂ້ອງ ໄປຕາມທິດສີຂຽວ ແລະ ຍືນຍົງ ນັ້ນ, ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ໄດ້ກຳນົດວິໄສທັດ ຮອດປີ 2030 ແລະ ຍຸດທະສາດ ຮອດປີ 2025 ເພື່ອຫັນມາເປັນແຜນການຈຸດສຸມອັນລະອຽດ ຂອງຕົນ ໃນແຕ່ລະດ້ານ ແນໃສ່ສືບຕໍ່ເສີມຂະຫຍາຍດ້ານຕັ້ງໜ້າ ແລະ ແກ້ໄຂບັນດາຈຸດອ່ອນ-ຂໍ້ຄົງຄ້າງ ທີ່ໄດ້ປະເຊີນໜ້າ ໃນການເຄື່ອນໄຫວຜ່ານມາ, ເພີ່ມທະວີການສະໜອງທຶນໃຫ້ກວມເອົາຫຼາຍຂົງເຂດທີ່ເປັນບູລິມະສິດຂອງລັດຖະບານ ໄປພ້ອມໆກັບການປະກອບສ່ວນສ້າງຄວາມເຂັ້ມແຂງທາງດ້ານວິຊາການ ແລະ ດ້ານການຄຸ້ມຄອງ ໃຫ້ແກ່ອົງການຈັດຕັ້ງຂອງລັດ ແລະ ທຸກພາກສ່ວນ ທີ່ເຮັດໜ້າທີ່ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ວິໄສທັດຮອດປີ 2030 ແລະ ຍຸດທະສາດ ຮອດປີ 2025 ສະບັບນີ້ ໄດ້ບັນລຸຄາດໝາຍນັ້ນ, ຫ້ອງການ ກປສ ເພີ່ມທະວີສ້າງຄວາມເຂັ້ມແຂງ ດ້ານການຈັດຕັ້ງ, ດ້ານບຸກຄະລາກອນ, ເປັນເຈົ້າການໃນການຮ່ວມມື ແລະ ຫັນເປັນຄູ່ຮ່ວມງານ ກັບທຸກຂະແໜງການ ທີ່ກ່ຽວຂ້ອງ, ບັນດາຜູ້ໃຫ້ທຶນ ແລະ ຜູ້ຮັບຜົນປະໂຫຍດຕ່າງໆ ທັງຮັບປະກັນໃຫ້ມີລາຍຮັບ ຂອງ ກປສ ເພີ່ມຂຶ້ນ ແລະ ມີຄວາມໝັ້ນຄົງ.

ທ້າຍສຸດນີ້, ຂ້າພະເຈົ້າຂໍສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຂອບໃຈ ມາຍັງທຸກພາກສ່ວນ ທີ່ມີສ່ວນຮ່ວມທັງໝົດ ພິເສດ ຂໍສະແດງຄວາມຂອບໃຈມາຍັງກຳມະການໃນສະພາບໍລິຫານ ກປສ, ຄະນະວິຊາການ, ພະນັກງານຫ້ອງການ ກປສ ທະນາຄານໂລກ, ຄູ່ຮ່ວມພັດທະນາ ແລະ ທຸກການປະກອບສ່ວນຂອງທຸກຂະແໜງການ ໃນການສ້າງ ແລະ ສືບຕໍ່ໃຫ້ການສະໜັບສະໜູນ ໃນການຈັດຕັ້ງປະຕິບັດວິໄສທັດ ຮອດປີ 2030 ແລະ ຍຸດທະສາດ ຮອດປີ 2025 ສະບັບນີ້ ໃຫ້ປະກົດຜົນເປັນຈິງ.

ນະຄອນຫຼວງວຽງຈັນ, __________ 2018

ລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ,

ປະທານສະພາບໍລິຫານ ກອງທຶນປົກປັກຮັກສາສິ່ງແວດລ້ອມ.

ສົມມາດ ພົລເສນາ

# ສາລະບານ

*ພາກທີ I ພາກສະເໜີ ກ່ຽວກັບ ກອງທຶນປົກປັກຮັກສາສິ່ງແວດລ້ອມ ........................................ 1*

**1.1 ໂຄງປະກອບການຈັດຕັ້ງຂອງ ກປສ ............................................................ 1**

ກ. ສະພາບໍລິຫານ ກປສ (ສກປສ) ............................................................ 1

ຂ. ຄະນະວິຊາການ ກປສ (ຄກປສ) ............................................................ 1

ຄ. ຫ້ອງການ ກປສ (ຫກປສ) ............................................................ 1

**1.2 ບົດບາດຂອງ ກປສ ໃນວຽກງານການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ........................ 3**

**1.3 ຜູ້ມີສ່ວນຮ່ວມ ແລະ ລາຍຮັບ ຂອງ ກປສ ............................................................ 4**

**1.4 ບ່ອນອີງພື້ນຖານດ້ານນະໂຍບາຍ ແລະ ນິຕິກຳ ສຳລັບ ການເຄື່ອນໄຫວ ຂອງ ກປສ .................. 5**

**1.5 ການສັງເກດ-ຕີລາຄາ ............................................................ 8**

**1.6 ສະຫຼຸບລວມ ............................................................ 9**

*ພາກທີ II ວິໄສທັດ ຮອດປີ 2030, ຍຸດທະສາດ ຮອດປີ 2025 ຂອງ ກປສ ............................ 10*

**2.1 ວິໄສທັດ ຮອດປີ 2030 ຂອງ ກປສ ............................................................ 10**

2.1.1 ວິໄສທັດ ............................................................ 10

2.1.2 ພາລະໜ້າທີ່ຂອງ ກປສ ............................................................ 10

2.1.3 ເປົ້າໝາຍຂອງ ກປສ ............................................................ 10

2.1.4. ຫຼັກການຂອງ ກປສ ............................................................ 10

**2.2 ຍຸດທະສາດ ຮອດປີ 2025 ............................................................ 11**

2.2.1 ທິດທາງລວມ ............................................................ 11

2.2.2 ເປົ້າໝາຍ ............................................................ 11

2.2.3 ຍຸດທະສາດ ຮອດປີ 2025 ............................................................ 11

2.2.4 ຜົນໄດ້ຮັບ ຂອງຍຸດທະສາດ ............................................................ 11

*ພາກທີ III ມາດຕະການຈັດຕັ້ງປະຕິບັດ ............................................................ 15*

ເອກະສານອ້າງອີງ ............................................................ **16**

## *ສາລະບານຮູບພາບ*

ຮູບພາບທີ 1: ໂຄງຮ່າງການຈັດຕັ້ງຂອງ ກປສ ............................................................ 2

ຮູບພາບທີ **2**: ແຜນຜັງກ່ຽວກັບວິໄສທັດ, ຍຸດທະສາດ ແລະ ແຜນການ 5 ປີຂອງ ກປສ ........................ 13

ຮູບພາບທີ 3: ແຜນຜັງກ່ຽວກັບວິໄສທັດ, ຍຸດທະສາດ ແລະ ແຜນການ 5 ປີຂອງ ກປສ ........................ 14

**ຄຳຫຍໍ້ ແລະ ຊື່ຫຍໍ້**

ADB = ທະນາຄານພັດທະນາອາຊີ

BOD = ສະພາບໍລິຫານ ກປສ

CBI = ການລົງທຶນໃສ່ດ້ານຊຸມຊົນ ແລະ ຊີວະນານາພັນ

CCN = ເຄືອຄ່າຍປົກປັກຮັກສາຊຸມຊົນ

EPF = ກອງທຶນປົກປັກຮັກສາສິ່ງແວດລ້ອມ

EPFO = ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ

EO = ຫ້ອງການບໍລິຫານ

IOC = ຄ່າໃຊ້ຈ່າຍໃນການບໍລິຫານ

LDC= ປະເທດດ້ອຍພັດທະນາ

LEnS2 = ໂຄງການສິ່ງແວດລ້ອມສັງຄົມໄລຍະ 2

Lao PDR = ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

M & E = ຕິດຕາມກວດກາ ແລະ ປະເມີນຜົນ

MONRE = ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

NGO = ອົງການບໍ່ຂຶ້ນກັບລັດຖະບານ

NREM = ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

NUOL = ມະຫາວິທະຍາໄລແຫ່ງຊາດລາວ

PA = ປ່າສະຫງວນ

PC = ການຄວບຄຸມມົນລະພິດ

PES = ການຈ່າຍເງິນທາງດ້ານສິ່ງແວດລ້ອມ

PICE = ການຈັດຕັ້ງປະຕິບັດນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງ

PM = ນາຍົກລັດຖະມົນຕີ

REDD = ການຫຼຸດຜ່ອນການປ່ອຍອາຍເຮືອນແກ້ວ ຈາກການທຳລາຍເຊື່ອມໂຊມ ແລະ ທຳລາຍປ່າໄມ້

ROI = ຜົນຕອບແທນຈາກສິ່ງແວດລ້ອມ

SDA = ອົງການຈັດຕັ້ງປະຕິບັດໂຄງການ

SFWs = ຮ່ວງການໃຫ້ເງິນພິເສດ

USD = ສະກຸນເງິນໂດລາສະຫະລັດ

WB = ທະນາຄານໂລກ

## ພາກທີ I ພາກສະເໜີ ກ່ຽວກັບ ກອງທຶນປົກປັກຮັກສາສິ່ງແວດລ້ອມ

ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ແມ່ນກອງທຶນ ຂອງລັດ ສ້າງຕັ້ງຂຶ້ນໃນວັນທີ 6 ມິຖຸນາ 2005 ໂດຍ ດຳລັດ ຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 146/ນຍ ແລະ ໄດ້ປັບປຸງພາລະບົດບາດ, ທີ່ຕັ້ງ ສິດ ແລະ ໜ້າທີ່ຄວາມຮັບຜິດຊອບ ຕາມດຳລັດສະບັບປັບປຸງເລກທີ 94/ນຍ, ໃນເດືອນ ມີນາ 2017. ພາລະບົດ ບາດຫຼັກ ຂອງ ກປສ ແມ່ນ ກອງທຶນຂອງລັດ ທີ່ສ້າງຂຶ້ນເພື່ອລະດົມ ແລະ ຮັບຂວາຍທຶນພາຍໃນ ແລະ ຕ່າງປະເທດ ດ້ວຍຮູບການ ຕ່າງໆ ແນໃສ່ສະສົມທຶນ ເພື່ອຕອບສະໜອງເຂົ້າໃນວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກ ຮັກສາສິ່ງແວດລ້ອມ ໃຫ້ມີປະສິດທິຜົນ ແລະ ຍືນຍົງ. ກປສ ເຄື່ອນໄຫວພາລະບົດບາດ ຂອງຕົນ ຜ່ານລະບົບບັນຊີ ທີ່ ເອີ້ນວ່າ ຮ່ວງທຶນ ຊຶ່ງປະກອບມີ: ຮ່ວງທຶນ ດ້ານນະໂຍບາຍ ແລະ ສ້າງຄວາມສາມາດ, ດ້ານການພັດທະນາຊຸມຊົນ ແລະ ຊີວະນາໆພັນ, ດ້ານສິ່ງແວດລ້ອມ (ການຄວບຄຸມມົນລະພິດ), ດ້ານການຄຸ້ມຄອງຊັບ ພະຍາກອນນ້ຳແບບຍືນຍົງ ແລະ ດ້ານການຄຸ້ມຄອງທີ່ດິນແບບຍືນຍົງ.

### 1.1 ໂຄງປະກອບການຈັດຕັ້ງຂອງ ກປສ

ກປສ ເຄື່ອນໄຫວ ບົນພື້ນຖານໂຄງປະກອບການຈັດຕັ້ງ ຊຶ່ງປະກອບດ້ວຍ:

1. ສະພາບໍລິຫານ ກປສ
2. ຄະນະວິຊາການ ກປສ
3. ຫ້ອງການ ກປສ

**ກ. ສະພາບໍລິຫານ ກປສ (ສກປສ)**

ສກປສ ເຮັດໜ້າທີ່ ຊີ້ນຳ-ນຳພາ ການເຄື່ອນໄຫວ ກປສ ແລະ ມີຄວາມຮັບຜິດຊອບ ຕໍ່ການຈັດຕັ້ງປະຕິບັດວຽກ ງານ ຂອງ ກປສ ໃຫ້ມີຜົນສຳເລັດ, ບັນລຸຈຸດປະສົງທີ່ຄາດໝາຍໄວ້ ແລະ ປະຕິບັດຕາມຫຼັກການບໍລິຫານ ກປສ, ຊຶ່ງ ປະກອບໄປດ້ວຍບັນດາຕົວແທນ ຈາກບັນດາກະຊວງທີ່ກ່ຽວຂ້ອງ, ອົງການຈັດຕັ້ງມະຫາຊົນ, ອົງການທ້ອງຖິ່ນ, ສະພາການຄ້າ ແລະ ອຸດສາຫະກຳ, ສະຖາບັນຄົ້ນຄວ້າ ຫຼື ອົງການຈັດຕັ້ງພັກລັດ ໂດຍມີ ລັດຖະມົນຕີເປັນປະທານ. ສະພາບໍລິຫານ ປະກອບມີ ສະມາຊິກທັງໝົດ 11 ທ່ານ ລວມມີ ປະທານ 1 ທ່ານ, ຮອງປະທານ 3 ທ່ານ ແລະ ກຳ ມະການອີກ 7 ທ່ານ ຊຶ່ງປະກອບສ້າງ ຈາກ 7 ກະຊວງທີ່ກ່ຽວຂ້ອງ, ຈາກສູນກາງແນວລາວສ້າງຊາດ, ສູນກາງ ສະຫະພັນແມ່ຍິງລາວ ແລະ ສະພາການຄ້າ ແລະ ອຸດສາຫະກຳ.

**ຂ. ຄະນະວິຊາການ ກປສ (ຄກປສ)**

ຄກປສ ຖືກແຕ່ງຕັ້ງໂດຍ ສກປສ ເພື່ອຊ່ວຍວຽກໃນການທົບທວນ, ປະເມີນ, ກັ່ນກອງດ້ານວິຊາການ ກ່ຽວ ກັບບົດສະເໜີໂຄງການ, ຕິດຕາມກວດກາ ການນຳໃຊ້ແຕ່ລະຮ່ວງທຶນ ແລະ ບັນຫາອື່ນໆ ເພື່ອຮັບປະກັນ ການສະ ໜອງທຶນ ໄປຕາມບູລິມະສິດ ແຫ່ງຊາດ ດ້ານການພັດທະນາເສດຖະກິດ-ສັງຄົມ, ດ້ານການຄຸ້ມຄອງຊັບພະຍາ ກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ. ຄະນະດັ່ງກ່າວ ປະກອບດ້ວຍຜູ້ ຕາງໜ້າຈາກ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ໂດຍມີຫົວໜ້າ ກົມແຜນການ ແລະ ການຮ່ວມມື ຂອງກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຫົວໜ້າຄະນະ ແລະ ຫົວໜ້າກົມ ແຜນການ ແລະ ການເງິນ ຂອງ ກະຊວງກະສິກຳ ແລະ ປ່າໄມ້ ເປັນຮອງຫົວໜ້າ ຄະນະ.

**ຄ. ຫ້ອງການ ກປສ (ຫກປສ)**

ຫກປສ ແມ່ນຫ້ອງການຄຸ້ມຄອງ-ບໍລິຫານ ພາຍໃຕ້ການຊີ້ນຳຂອງ ສກປສ , ທັງເຮັດໜ້າທີ່ເປັນກອງເລຂາ ຂອງ ສກປສ ຊຶ່ງປະກອບມີ ຫົວໜ້າຫ້ອງການ, ຮອງຫົວໜ້າຫ້ອງການ ຈຳນວນໜຶ່ງ ແລະ ພະນັກງານວິຊາການ ມາ ຈາກການຄັດເລືອກຕາມລະບຽບຂັ້ນຕອນ ທີ່ໄດ້ກຳນົດໄວ້ໃນລະບຽບການຄຸ້ມຄອງ ກປສ. ຫ້ອງການ ກປສ ຍັງ ປະກອບມີ ຜູ້ຊ່ຽວຊານ, ທີ່ປຶກສາສະເພາະດ້ານ ທີ່ມີຄວາມຈຳເປັນ ມາຈາກການຄັດເລືອກຕາມລະບຽບຂັ້ນຕອນ ທີ່ ໄດ້ກຳນົດໄວ້ໃນ ລະບຽບການຄຸ້ມຄອງ ກປສ ແລະ ໄດ້ຮັບການເຫັນດີຈາກສະພາບໍລິຫານ ກປສ. ຫກປສ ປະກອບ

ມີ 4 ພະແນກ ແລະ 1 ໜ່ວຍງານ ຊຶ່ງປະກອບມີ: ພະແນກຄຸ້ມຄອງໂຄງການ, ພະແນກການເງິນ, ພະແນກຈັດຊື້-ຈັດຈ້າງ, ພະແນກບໍລິຫານ ແລະ ໜ່ວຍງານລະດົມທຶນ ແລະ ການສື່ສານ. ພະນັກງານທັງຫມົດ ພາຍໃນ ກປສ ມາຮອດປະຈຸບັນປະກອບມີທັງຫມົດ 45 ຄົນ, ຍິງ 16 ຄົນ.

<u>ໂຄງຮ່າງການຈັດຕັ້ງຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ</u>




<u>ໂຄງຮ່າງການຈັດຕັ້ງ ຕໍາແໜ່ງ ພະນັກງານ ຫກປສ 2018-2020</u>




**ຮູບພາບທີ 1: ໂຄງຮ່າງການຈັດຕັ້ງຂອງ ກປສ**

## 1.2 ບົດບາດຂອງ ກປສ ໃນວຽກງານການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ

ສປປ ລາວ ຍັງມີຊັບພະຍາກອນທຳມະຊາດທີ່ອຸດົມສົມບູນ ແລະ ສິ່ງແວດລ້ອມທີ່ດີ ທີ່ເປັນພື້ນຖານຕົ້ນຕໍ ປະກອບສ່ວນໃນຂະບວນການພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດ, ເຂດແຄວ້ນ, ແຂວງ, ເມືອງ ໂດຍສະເພາະ ການພັດທະນາຊົນນະບົດແບບຮອບດ້ານ ແລະ ການຫຼຸດຜ່ອນຄວາມທຸກຍາກແຫ່ງຊາດ.

ການເຕີບໂຕທາງດ້ານເສດຖະກິດຂອງ ສປປ ລາວ ສ່ວນໃຫຍ່ ມີພື້ນຖານ ມາຈາກການຂຸດຄົ້ນ ແຫຼ່ງທຶນທາງທຳມະຊາດເປັນຕົ້ນຕໍ. ຕໍ່ບັນຫາດັ່ງກ່າວ, ລັດຖະບານ ກໍ່ໄດ້ໃຫ້ບູລິມະສິດ ແກ່ການລິເລີ່ມນະໂຍບາຍຫັນປ່ຽນໃໝ່ ເປັນຕົ້ນ ສົ່ງເສີມນະໂຍບາຍດ້ານການເຕີບໂຕສີຂຽວ, ຮັບຮອງເອົາ ເປົ້າໝາຍການພັດທະນາແບບຍືນຍົງ ແລະ ໃຫ້ຄໍາໝາຍໝັ້ນ ຕໍ່ຂໍ້ຕົກລົງ ປາຣີ ດ້ານການປ່ຽນແປງດິນຟ້າອາກາດ. ພ້ອມກັນນັ້ນ, ລັດຖະບານໄດ້ວາງຈຸດສຸມຂອງການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ທີ່ມີການເຕີບໂຕ ໂດຍສະເພາະໃນໄລຍະທົດສະວັດ ທີ່ຜ່ານມາ ເພື່ອນໍາເອົາປະເທດຊາດກ້າວໄປສູ່ການຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາໃນປີ 2020, ສ້າງພື້ນຖານໃຫ້ ກາຍເປັນປະເທດທີ່ມີລາຍຮັບປານກາງສູງ ໃນປີ 2025 ແລະ ໃຫ້ກາຍເປັນປະເທດທີ່ມີລາຍຮັບສູງ ໃນປີ 2030. ເພື່ອຮັບປະກັນການສ້າງພື້ນຖານ ຂອງການເຕີບໂຕ ໃຫ້ບັນລຸຄາດໝາຍທີ່ໄດ້ວາງໄວ້, ສປປ ລາວ ຕ້ອງຮັບປະກັນ ການຄຸ້ມຄອງ ຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມແບບຍືນຍົງ ໄປພ້ອມໆກັບການຫັນປ່ຽນນະໂຍບາຍຈາກການພັດທະນາທີ່ອີງໃສ່ຂະແໜງການຊັບພະຍາກອນທຳມະຊາດທີ່ບໍ່ມີຄວາມໝັ້ນຄົງ ໄປສູ່ການພັດທະນາ ດ້ານຊັບພະຍາກອນທຳມະຊາດ ຂອງ ສປປ ລາວ ທີ່ມີທ່າແຮງ ແລະ ໝັ້ນຄົງ, ເປັນຕົ້ນ ການພັດທະນາພະລັງງານໄຟຟ້ານ້ຳຕົກ, ການທ່ອງທ່ຽວທຳມະຊາດ ແລະ ວັດທະນະທຳແບບອະນຸລັກ, ການສົ່ງເສີມທຸລະກິດຂະໜາດກາງ-ຂະໜາດນ້ອຍ ແລະ ການຜະລິດກະສິກຳແບບອຸດສະຫະກຳ .

ລັດຖະບານລາວ ໄດ້ກຳນົດ ບັນດາສິ່ງທ້າທາຍ ແລະ ນຳສະເໜີ ນະໂຍບາຍ ໃນການແກ້ໄຂ ແລະ ແຜນດຳເນີນງານ ສະເພາະ ເພື່ອສຸມໃສ່ ວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ໃນຂະບວນການເຕີບໂຕດ້ານເສດຖະກິດ. ການເຕີບໂຕສີຂຽວ, ແມ່ນການເຕີບໂຕໃນຮູບແບບໃໝ່ ໄປຄຽງຄູ່ກັບການພັດທະນາແບບຍືນຍົງ ທີ່ເອົາໃຈໃສ່ ເປັນມິດກັບສິ່ງແວດລ້ອມ, ມີປະສິດທິຜົນ, ທົນທານ ຕໍ່ສະພາບການປ່ຽນແປງດິນຟ້າອາກາດ ແລະ ມີການເຕີບໂຕແບບຮອບດ້ານ. ມົນລະພິດ ດ້ານສິ່ງແວດລ້ອມ ແມ່ນໄດ້ຮັບການເອົາໃຈໃສ່ ຕິດຕາມກວດກາ ແລະ ຄຸ້ມຄອງ ຢ່າງເປັນລະບົບ ແນໃສ່ຮັບປະກັນດ້ານສຸຂະພາບ ແລະ ສ້າງ ສປປ ລາວ ບັນລຸ ຄຳຂວັນ: ຂຽວ ສະອາດ ງາມຕາ. ມີຈິນຕະນາການໃໝ່ ໃນລະດັບຊາດ ແລະ ສ້າງໃຫ້ເປັນປະເທດ ຂຽວ ສະອາດ ງາມຕາ ແມ່ນໜໍ່ແໜງພື້ນຖານສຳຄັນ ຂອງການເຕີບໂຕສີຂຽວ, ຊຶ່ງໄດ້ສະແດງອອກ ໃນການລົງທຶນ ໃນວຽກງານ ການປົກປັກຮັກສາ ແລະ ພັດທະນາ ສິ່ງແວດລ້ອມ ເປັນປັດໄຈຫຼັກ ຂອງການເຕີບໂຕນຳປະເທດໄປສູ່ ຈຸດໝາຍ ການດຶງດູດ ການລົງທຶນໃສ່ການທ່ອງທ່ຽວ.

ເພື່ອແກ້ໄຂສິ່ງທ້າທາຍ ຈາກການພັດທະນາຢູ່ ສປປ ລາວ, ລັດຖະບານ ຕ້ອງເພີ່ມທະວີ ການສ້າງຄວາມເຂັ້ມແຂງ ຂອງການຈັດຕັ້ງພາກລັດ ໃນທຸກລະດັບ ນັບຕັ້ງແຕ່ສູນກາງ ລົງຮອດທ້ອງຖິ່ນ ໃນວຽກງານ ຄຸ້ມຄອງ ແລະ ຕິດຕາມກວດກາດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນໂຄງການລົງທຶນ ແລະ ກິດຈະການພັດທະນາຕ່າງໆ ໂດຍສະເພາະ ແມ່ນກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກະຊວງທີ່ກ່ຽວຂ້ອງ ຍັງຂາດພະນັກງານວິຊາການ ທີ່ມີຄວາມຮູ້ຄວາມສາມາດສູງ, ຂາດການປະສານງານທີ່ດີ ລະຫວ່າງຂະແໜງການ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງບໍ່ສັງກັດລັດ ແລະ ໃນຂະບວນການ ກະຈາຍອຳນາດລົງສູ່ທ້ອງຖິ່ນຂອງລັດຖະບານ. ພ້ອມດຽວກັນນັ້ນ, ສິ່ງສຳຄັນ ຕ້ອງໄດ້ສ້າງເງື່ອນໄຂທີ່ເອື້ອອຳນວຍ ໃຫ້ຊຸມຊົນ ແລະ ປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກໂຄງການຕ່າງໆ ໄດ້ເຂົ້າເຖິງທຸກຂໍ້ມູນຂ່າວສານ ແລະ ເປັນເຈົ້າການ ໃນການເຂົ້າຮ່ວມ ໃນຂະບວນການພິຈາລະນາ ແລະ ການຕັດສິນໂຄງການ ຮ່ວມກັບຜູ້ມີສ່ວນຮ່ວມໂຄງການ ແລະ ມີຄວາມຮັບຮູ້ ເພີ່ມຂຶ້ນ ກ່ຽວກັບມົນລະພິດ ດ້ານສິ່ງແວດລ້ອມ ແລະ ຄຸນຄ່າທີ່ສຳຄັນ ຂອງການບໍລິການລະບົບນິເວດ ແລະ ຊີວະນາໆພັນ.

ບົດບາດຫຼັກ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ແມ່ນເພື່ອລະດົມຂົນຂວາຍ, ສະສົມ ແລະ ສະໜອງທຶນ ຕອບສະໜອງໃຫ້ແກ່ວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ແບບຍືນຍົງ ປະກອບສ່ວນເຮັດໃຫ້ແຜນພັດທະນາເສດຖະກິດ-ສັງຄົມ ບັນລຸຕາມທິດສີຂຽວ ແລະ ຍືນຍົງ.

ກ່ອນອື່ນໝົດ, ກປສ ມີບົດບາດ ໃນການປ້ອງກັນ ແລະ ຫຼຸດຜ່ອນຊ່ອງຫວ່າງທາງດ້ານການເງິນ ຂອງງົບປະມານລັດ ເຂົ້າໃນວຽກງານສ້າງຄວາມເຂັ້ມແຂງທາງດ້ານການຈັດຕັ້ງ-ບຸກຄະລາກອນ ໃນຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ດ້ານວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ແບບຍືນຍົງ ທັງປະກອບສ່ວນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃຫ້ໄປຕາມທິດສີຂຽວ ແລະ ຍືນຍົງ. ອັນທີສອງ, ກປສ ຕ້ອງສ້າງຄວາມເຂັ້ມແຂງ ແລະ ມີຄວາມຮັບຜິດຊອບໃນການລະດົມທຶນ ແລະ ມີກົນໄກການເງິນທີ່ຍືນຍົງ ສະໜອງໃຫ້ແກ່ວຽກງານ ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ສອດຄ່ອງຕາມ ບູລິມະສິດແຫ່ງຊາດ ດ້ານການເຕີບໂຕສີຂຽວ  ແລະ ການພັດທະນາເສດຖະກິດ-ສັງຄົມແບບຍືນຍົງ. ນອກນັ້ນ, ກປສ ຍັງມີບົດບາດ ໃນການປະສານງານ ແລະ ຮ່ວມມື ກັບໂຄງການຕ່າງໆ ໃຫ້ຫຼາຍຂຶ້ນ, ໂດຍການຈັດກອງປະຊຸມການຮ່ວມມື ທັງນີ້ກໍ່ເພື່ອເປັນການ ໃຫ້ການສະໜັບສະໜູນບັນດາໂຄງການ ເພື່ອຮັບປະກັນວ່າ ໂຄງການທີ່ມີລັກສະນະຄ້າຍຄືກັນ ແມ່ນມີການຮ່ວມມືກັນ ແລະ ຊ່ວຍເຫຼືອຊຶ່ງກັນ ແລະ ກັນ ຕາມຄວາມເຫມາະສົມ. ຫ້ອງການ ກປສ ຈະສືບຕໍ່ໃຫ້ການຝຶກອົບຮົມ ທາງດ້ານການຕິດຕາມກວດກາ ແລະ ຕີລາຄາໝາກຜົນ ແລະ ສິ່ງເສີມການຮ່ວມມືທີ່ມີປະສິດທິພາບ ລະຫວ່າງບັນດາໂຄງການທີ່ກ່ຽວຂ້ອງທີ່ໄດ້ຮັບທຶນ.

## 1.3 ຜູ້ມີສ່ວນຮ່ວມ ແລະ ລາຍຮັບ ຂອງ ກປສ

ກປສ ໄດ້ເລີ່ມຕົ້ນເຄື່ອນໄຫວ ດ້ວຍການສະໜອງທຶນເບື້ອງຕົ້ນ ສຳລັບວຽກງານບໍລິຫານ ຂອງທະນາຄານພັດທະນາອາຊີ ແລະ ການສະໜັບສະໜູນ ຂອງທະນາຄານໂລກ ເພື່ອຈັດຕັ້ງປະຕິບັດ ໂຄງການ ສິ່ງແວດລ້ອມ ແລະ ສັງຄົມ ໃນ ສປປ ລາວ. ນອກຈາກນັ້ນ, ກປສ ຍັງໄດ້ສືບຕໍ່ຮ່ວມມື ກັບຫຼາຍໆອົງການຈັດຕັ້ງ ເພື່ອປົກປັກຮັກສາສິ່ງແວດລ້ອມ ໃນ ສປປ ລາວ. ແຫຼ່ງທຶນ ແລະ ລາຍຮັບ ເຂົ້າ ກປສ ແມ່ນມາຈາກ ງົບປະມານລັດ, ການປະກອບສ່ວນ ພາຍໃຕ້ພັນທະຕາມສັນຍາລະຫວ່າງ ລັດຖະບານແຫ່ງ ສປປ ລາວ ກັບ ບັນດາໂຄງການລົງທຶນ ຂອງພາກເອກະຊົນ ຕາມກົດໝາຍວ່າດ້ວຍໄຟຟ້າ, ກົດໝາຍວ່າດ້ວຍແຮ່ທາດ ແລະ ກົດໝາຍວ່າດ້ວຍອື່ນໆທີ່ກ່ຽວຂ້ອງ; ຈາກການ ຊ່ວຍເຫຼືອລ້າ ຂອງອົງການຈັດຕັ້ງ ພາຍໃນ ແລະ ສາກົນ; ການປະກອບສ່ວນຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ; ຈາກດອກເບ້ຍ ແລະ ຜົນກຳໄລ ທີ່ເກີດຈາກການລົງທຶນ ຂອງ ກປສ ຢູ່ ທະນາຄານ; ຄ່າບູລະນະຟື້ນຟູສິ່ງແວດລ້ອມ ຈາກບັນດາໂຄງການການລົງທຶນ ແລະ ກິດຈະການຕ່າງໆ; ຄ່າບໍລິການລະບົບນິເວດ; ຄ່າປັບໃໝ ແລະ ຄ່າທົດແທນຄວາມເສຍຫາຍຕໍ່ສິ່ງແວດລ້ອມ.

ໃນໄລຍະ 10 ປີ (2005-2015), ກປສ ໄດ້ຮັບ ແລະ ຄຸ້ມຄອງ ທຶນ ໃນມູນຄ່າ 46,1 ຕື້ກີບ  (5,7 ລ້ານໂດລາສະຫະລັດ) ຈາກທະນາຄານພັດທະນາອາຊີ ມອບໃຫ້ແກ່ລັດຖະບານລາວ ເພື່ອປະກອບໃຫ້ ເປັນຕົ້ນທຶນ ຂອງ ກປສ ແລະ ໄດ້ຮັບທຶນຊ່ວຍເຫຼືອລ້າ ໃນມູນຄ່າ 56,7 ຕື້ກີບ (7 ລ້ານໂດລາສະຫະລັດ) ຈາກທະນາຄານໂລກ ເພື່ອຈັດຕັ້ງປະຕິບັດ ໂຄງການສິ່ງແວດລ້ອມ ແລະ ສັງຄົມຢູ່ ສປປ ລາວ (ຄສລ1) ແລະ ໄດ້ຮັບທຶນ ຈາກການປະກອບສ່ວນປະຕິບັດພັນທະຕາມສັນຍາ ລະຫວ່າງ ລັດຖະບານແຫ່ງ ສປປ ລາວ ກັບ ບັນດາໂຄງການລົງທຶນ ແລະ ກິດຈະການພັດທະນາຕ່າງໆ ປະມານ 1,6 ຕື້ກີບ (200,000 ໂດລາສະຫະລັດ) ໃນໄລຍະ 5 ປີທຳອິດ  (2005-2010) ແລະ 16,2 ຕື້ກີບ   (2 ລ້ານໂດລາສະຫະລັດ) ໃນໄລຍະ 5 ປີ ເທື່ອທີສອງ (2011-2015). ໂດຍລວມແລ້ວ , ໃນໄລຍະນີ້ ກປສ ໄດ້ຮັບທຶນຫຼາຍກ່ວາ 89,1 ຕື້ກີບ (11 ລ້ານໂດລາສະຫະລັດ) ໄດ້ສະໜອງທຶນຊ່ວຍເຫຼືອລ້າໃຫ້ແກ່  379 ໂຄງການ ໃນທົ່ວປະເທດໃນຮູບແບບ ໃຫ້ການຊ່ວຍເຫຼືອລ້າທີ່ບໍ່ຈຳເປັນແທນຄືນ ແລະ ການກູ້ຢືມມີອັດຕາດອກເບ້ຍຕ່ຳ. ບຸກຄົນ, ນິຕິບຸກຄົນທາງທຸລະກິດ, ອົງການຈັດຕັ້ງ ພາກລັດ ຫຼື ອົງການຈັດຕັ້ງສັງຄົມ ແມ່ນມີສິດສະເໜີຂໍທຶນຊ່ວຍເຫຼືອ ຈາກ ກປສ ໄດ້. ບັນດາກິດຈະກຳເງື່ອນໄຂຂໍທຶນ ໄດ້ລະບຸໄວ້ ໃນດຳລັດ ວ່າດ້ວຍ ກປສ.

ກປສ ຈະບໍ່ສະໜອງທຶນ ໃນຮູບແບບໃດໆ ໃຫ້ແກ່ ຜູ້ພັດທະນາໂຄງການ ເພື່ອນຳໃຊ້ເຂົ້າໃນການຫຼຸດຜ່ອນ ຫຼື ຊົດເຊີຍ ຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການ, ນອກຈາກວ່າ ໃນບາງກິດຈະກຳ ທີ່ນອນໃນເງື່ອນໄຂການສະໜອງໃຫ້ທຶນ ກປສ.

ໃນໄລຍະ ປີ 2016-2017 ກປສ ມີຍອດຍົກມາຈາກປີ 2015 ໃນບັນຊີ 28,2 ຕື້ກີບ( 3,4 ລ້ານໂດລາສະຫະລັດ), ລວມລາຍຮັບທັງໝົດເພື່ອຈັດຕັ້ງປະຕິບັດແຜນການ 2016 ແລະ 2017 ໃນມູນຄ່າປະມານ 56,2 ຕື້ກີບ (6,9 ລ້ານໂດລາສະຫະລັດ) ຊຶ່ງງົບປະມານດັ່ງກ່າວລວມທັງງົບປະມານ ຄສລ2 ແລະ ກປສ ເອງ. ໃນຊຸມປີດັ່ງກ່າວ, ກປສ ໄດ້ສືບຕໍ່ລົງຕິດຕາມຊຸກຍູ້ ວຽກງານການຄຸ້ມຄອງໂຄງການ ແລະ ການເງິນ 36 ໂຄງການ ທີ່ໄດ້ຮັບທຶນຈາກ ຄສລ 2 (ຮ່ວງທຶນ ດ້ານນະໂຍບາຍ ມີ 24 ໂຄງການ ແລະ ຮ່ວງທຶນ ດ້ານຊີວະນາໆພັນ ມີ 12 ໂຄງການ ແລະ 2 ທຶນໃຫ້ແກ່ການກະກຽມ ໂຄງການ). ສ່ວນທຶນຂອງ ກປສ ໄດ້ລົງທຶນໃສ່ 36 ໂຄງການ ໃນມູນຄ່າ 14 ຕື້ກີບ (1,7 ລ້ານໂດລາສະຫະລັດ).

ສຳລັບ 3 ປີຕໍ່ໜ້າ (2018-2020), ກປສ ໄດ້ສືບຕໍ່ຈັດຕັ້ງປະຕິບັດໂຄງການທີ່ໄດ້ຮັບທຶນຊ່ວຍເຫຼືອ ລວມທັງທຶນຊ່ວຍເຫຼືອລ້າ ແລະ ທຶນກູ້ຢືມ ຈາກທະນາຄານໂລກ ໃນມູນຄ່າ 314,2 ຕື້ກີບ (38,8 ລ້ານໂດລາສະຫະລັດ) ທີ່ອະນຸມັດມາຈັດຕັ້ງປະຕິບັດ ໂຄງການສິ່ງແວດລ້ອມ ແລະ ສັງຄົມ ຢູ່ ສປປ ລາວ (ຄສລ 2) ໂດຍເລີ່ມຕົ້ນການຈັດຕັ້ງປະຕິບັດມາແຕ່ ປີ 2014. ຕາມການຄາດຄະເນໄວ້ວ່າ 5 ປີຕໍ່ໜ້າ ກປສ ຈະສາມາດລະດົມທຶນໄດ້ເຖິງ 99 ຕື້ກີບ (11,9 ລ້ານໂດລາສະຫະລັດ), ແຕ່ມາຮອດປະຈຸບັນ ນັບແຕ່ປີ 2016 ແລະ 2017 ໄດ້ລະດົມທຶນ ໃນມູນຄ່າ 14 ຕື້ກີບ (1,7 ລ້ານໂດລາສະຫະລັດ).

## 1.4 ບ່ອນອີງພື້ນຖານດ້ານນະໂຍບາຍ ແລະ ນິຕິກຳ ສຳລັບ ການເຄື່ອນໄຫວ ຂອງ ກປສ

ມີ 5 ບ່ອນອີງພື້ນຖານອັນຈຳເປັນຕົ້ນຕໍ ໃນການສຸມໃສ່ຊັບພະຍາກອນຂອງຕົນ ໂດຍສະເພາະທ່າແຮງດ້ານຊັບພະຍາກອນທຳມະຊາດ ປະຢັດ, ສົມເຫດສົມຜົນ ແລະ ມີປະສິດທິຜົນ ເພື່ອບັນລຸການພັດທະນາທາງດ້ານເສດຖະກິດ-ສັງຄົມ ແຫ່ງຊາດ ຕາມທິດສີຂຽວ ແລະ ຍືນຍົງ ຊຶ່ງກາຍມາເປັນບ່ອນອີງ ພື້ນຖານສຳຄັນຂອງການເຄື່ອນໄຫວ ກປສ ເປັນຕົ້ນ:

1. ການປະຕິບັດພັນທະຕໍ່ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ດັ່ງທີ່ລະບຸໄວ້ຢ່າງຈະແຈ້ງ ໃນມາດຕາ 19 ຂອງລັດຖະທຳມະນູນແຫ່ງຊາດ ສະບັບປັບປຸງ ປີ 2015;
2. ການປະຕິບັດພັນທະໃນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ ໃນວຽກງານ ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ດັ່ງທີ່ລະບຸໄວ້ໃນມາດຕາ 65 ຂອງ ກົດໝາຍວ່າດ້ວຍ ສິ່ງແວດລ້ອມ ສະບັບປັບປຸງ ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
3. ການປະກອບສ່ວນປະຕິບັດພັນທະຕາມສັນຍາ ລະຫວ່າງ ລັດຖະບານແຫ່ງ ສປປ ລາວ ກັບ ບັນດາໂຄງການລົງທຶນດ້ານໄຟຟ້ານ້ຳຕົກ ແລະ ບໍ່ແຮ່, ຊຶ່ງມີຄວາມຈຳເປັນຢ່າງຍິ່ງ ໃນການປົກປັກຮັກສາເຂດອ່າງນ້ຳ, ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງເຂດປ່າປ້ອງກັນ ແລະ ປັບປຸງສິ່ງແວດລ້ອມຊຸມຊົນໃນທ້ອງຖິ່ນ ດັ່ງທີ່ລະບຸໄວ້ໃນກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍ ໄຟຟ້າ, ບໍ່ແຮ່, ກົດໝາຍວ່າດ້ວຍນ້ຳ ແລະ ອື່ນໆ;
4. ການດຳເນີນພັນທະໃນການແກ້ໄຂບັນຫາສິ່ງແວດລ້ອມທີ່ພົ້ນເດັ່ນ ໂດຍສະເພາະ ຜົນກະທົບຈາກຂີ້ເຫຍື້ອ ແລະ ການປົນເປື້ອນຈາກຢາປາບສັດຕູພືດ ຈາກຕົວເມືອງ ແລະ ເຂດກະສິກຳ, ມົນລະພິດທາງນ້ຳ ແລະ ຊັບພະຍາກອນນ້ຳ ລວມທັງ ການແກ້ໄຂບັນຫາການຄຸ້ມຄອງທີ່ດິນ ຕາມທີ່ໄດ້ລະບຸໄວ້ໃນກົດໝາຍວ່າດ້ວຍສິ່ງແວດລ້ອມ;
5. ການປັບຕົວ ແລະ ການຫຼຸດຜ່ອນ ຜົນກະທົບທາງລົບ ຈາກສະພາບການປ່ຽນແປງດິນຟ້າອາກາດ.

ບັນດານະໂຍບາຍ, ນິຕິກຳຫຼັກ ແລະ ສົນທິສັນຍາສາກົນ ທີ່ກ່ຽວຂ້ອງກັບສິ່ງແວດລ້ອມ ທີ່ເປັນເອກະສານບ່ອນອີງພື້ນຖານ ປະກອບມີ ດັ່ງນີ້:

- **ບ່ອນອີງທາງດ້ານນະໂຍບາຍ, ຍຸດທະສາດ ແລະ ແຜນງານ**

1. ຜົນຂອງກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ;
2. ວິໄສທັດ ຮອດປີ 2030, ຍຸດທະສາດ 10 ປີ ການພັດທະນາເສດຖະກິດ-ສັງຄົມ ແລະ ແຜນພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ສະໄໝທີ 8 (2016-2020);
3. ວິໄສທັດ ຮອດປີ 2030, ຍຸດທະສາດ 10 ປີ (2016-2025) ແລະແຜນ 5 ປີ (2016-2020) ຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
4. ແຜນແມ່ບົດການຈັດສັນທີ່ດິນແຫ່ງຊາດ 2018;
5. ຜົນການຈັດຕັ້ງປະຕິບັດ ເປົ້າໝາຍສະຫະສະວັດຄັ້ງທີ 7 ກ່ຽວກັບຄວາມຍືນຍົງທາງດ້ານສິ່ງແວດລ້ອມ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (2013);
6. ຍຸດທະສາດສິ່ງແວດລ້ອມ 2011– 2020;
7. ຍຸດທະສາດການພັດທະນາກະສິກຳ 2011- 2020 (2010);
8. ຍຸດທະສາດການປ່ຽນແປງດິນຟ້າອາກາດ (2010);
9. ຍຸດທະສາດປ່າໄມ້ຮອດປີ 2020 (2005);
10. ຮ່າງນະໂຍບາຍ ແລະ ຍຸດທະສາດ ກ່ຽວກັບນ້ຳ (2013);
11. ຍຸດທະສາດແຫ່ງຊາດຮອດປີ 2020 ແຜນຈັດຕັ້ງປະຕິບັດກ່ຽວກັບຊີວະນາໆພັນ ຮອດປີ 2010 (2004);
12. ແຜນຈັດຕັ້ງປະຕິບັດແຫ່ງຊາດ ກ່ຽວກັບການພັດທະນາພະລັງງານທົດແທນ ໃນ ສປປ ລາວ (2011);
13. ແຜນແຫ່ງຊາດດ້ານພະລັງງານ ແລະ ບໍ່ແຮ່ ຮອດປີ 2020;
14. ແຜນປະຕິບັດການແຫ່ງຊາດ ດ້ານການທ່ອງທ່ຽວ ຮອດປີ 2020;
15. ແຜນປະຕິບັດງານແຫ່ງຊາດດ້ານກະສິກຳ ຮອດປີ 2015;

- **ບ່ອນອີງທາງດ້ານນິຕິກຳຫຼັກໆ**

1. ລັດຖະທຳມະນູນແຫ່ງ ສປປ ລາວ, 8 ທັນວາ 2015;
2. ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ, ເລກທີ 29/ສພຊ, 18 ທັນວາ 2012;
3. ກົດໝາຍວ່າດ້ວຍທີ່ດິນ, ເລກທີ 4/ສພຊ, 21 ຕຸລາ 2003;
4. ກົດໝາຍວ່າດ້ວຍປ່າໄມ້, ເລກທີ 6/ສພຊ, 24 ທັນວາ 2007;
5. ກົດໝາຍວ່າດ້ວຍ ນ້ຳ ແລະ ຊັບພະຍາກອນນ້ຳ, ເລກທີ 23/ສພຊ, ລົງວັນທີ 11 ພຶດສະພາ 2017;
6. ກົດໝາຍວ່າດ້ວຍກະສິກຳ, ເລກທີ 0198/ສພຊ, 10 ຕຸລາ 1998;
7. ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ, ເລກທີ 7/ສພຊ, 24 ທັນວາ 2007;
8. ກົດໝາຍວ່າດ້ວຍປະມົງ, ເລກທີ 3/ສພຊ, 9 ກໍລະກົດ 2009;
9. ກົດໝາຍວ່າດ້ວຍແຮ່ທາດ, ເລກທີ 31/ສພຊ, 03 ພະຈິກ 2017;
10. ກົດໝາຍວ່າດ້ວຍໄຟຟ້າ, ເລກທີ 19/ສພຊ, 09 ພຶດສະພາ 2017;
11. ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ເລກທີ 14/ສພຊ, 17 ພະຈິກ 2016;

12. ກົດໝາຍວ່າດ້ວຍການລົງທຶນລັດ, ເລກທີ 08/ສພຊ, 26 ພະຈິກ 2009;
13. ລັດຖະບັນຍັດຂອງປະທານປະເທດວ່າດ້ວຍອັດຕາຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນຂອງລັດ, ເລກທີ 02/ປປທ, 18 ພະຈິກ 2009;
14. ດຳລັດວ່າດ້ວຍເອົາທີ່ດິນຂອງລັດໃຫ້ເຊົ່າ ຫຼື ສຳປະທານ , ເລກທີ 135/ນຍ, 25 ພຶດສະພາ 2009;
15. ດຳລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນຈາກໂຄງການພັດທະນາ, ເລກທີ 84/ນຍ, 5 ເມສາ 2016;
16. ດຳລັດວ່າດ້ວຍປ່າປ້ອງກັນ, ເລກທີ 333/ນຍ, 19 ກໍລະກົດ 2010;
17. ດຳລັດວ່າດ້ວຍການພັດທະນາປ່າໄມ້ ແລະ ແຫຼ່ງຊັບພະຍາກອນປ່າໄມ້, ເລກທີ 38/ນຍ, 21 ກຸມພາ 2005;
18. ນະໂຍບາຍຂອງ ສປປ ລາວ ກ່ຽວກັບຄວາມຍືນຍົງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງພະລັງງານນ້ຳ, ເລກທີ 561/ຄຜທ, 7 ກໍລະກົດ 2005;
19. ນະໂຍບາຍຂອງ ສປປ ລາວ ກ່ຽວກັບການປະເມີນຜົນກະທົບຕໍ່ສຸຂະພາບ, ເລກທີ 54/ ນຍ, 23 ມີນາ 2006;
20. ຍຸດທະສາດຂອງ ສປປ ລາວ ກ່ຽວກັບພະລັງງານທົດແທນ, ເລກທີ 324/ລບ, 11 ຕຸລາ 2011;
21. ຂໍ້ຕົກລົງ ວ່າດ້ວຍ ມາດຕະຖານສິ່ງແວດລ້ອມແຫ່ງຊາດ, ເລກທີ 0832/ກຊສ, 3 ມີນາ 2017;
22. ດຳລັດວ່າດ້ວຍ ການປະເມີນຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ, ເລກທີ 112/ນຍ, ລົງວັນທີ 16 ກຸມພາ 2010;
23. ຄຳແນະນຳ ວ່າດ້ວຍ ຂະບວນການສຶກສາເບື້ອງຕົ້ນຜົນກະທົບເບື້ອງຕົ້ນຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ, ສະບັບເລກທີ 8029/ກຊສ, ລົງວັນທີ 17 ທັນວາ 2013; ແລະ
24. ຄຳແນະນຳ ວ່າດ້ວຍ ຂະບວນການປະເມີນຜົນກະທົບສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຈາກການລົງທຶນ ແລະ ກິດຈະການຕ່າງໆ, ສະບັບເລກທີ 8030/ກຊສ, ລົງວັນທີ 17 ທັນວາ 2013.

- **ພັນທະຕໍ່ສົນທິສັນຍາສາກົນດ້ານສິ່ງແວດລ້ອມ**

1. ສົນທິສັນຍາຂອງສະຫະປະຊາຊາດ ດ້ານການປ່ຽນແປງດິນຟ້າອາກາດ (UNFCCC);
2. ສົນທິສັນຍາສະຫະປະຊາຊາດ ດ້ານຊີວະນາໆພັນ (UNCBD);
3. ສົນທິສັນຍາສະຫະປະຊາຊາດ ດ້ານການຕ້ານການກາຍເປັນທະເລຊາຍ (UNCCD);
4. ສົນທິສັນຍາ ວຽນນາ ແລະ ສົນທິສັນຍາ ມົງເຣອານ ກ່ຽວກັບໂອໂຊນ;
5. ສົນທິສັນຍາດ້ານການຄຸ້ມຄອງການຄ້າຂາຍສັດປ່າ ແລະ ພັນພືດທີ່ໃກ້ຈະສູນພັນ (CITES);
6. ສົນທິສັນຍາສະຕ໋ອກໂຮມ ດ້ານການຄຸ້ມຄອງສານເຄມີອົງຄະທາດອັນຕະລາຍທີ່ຕົກຄ້າງ (POPs);
7. ສົນທິສັນຍາຣອດເຕີດາມ ດ້ານຂັ້ນຕອນການຍິນຍອມກ່ອນແຈ້ງ ສຳລັບສານເຄມີອັນຕະລາຍບາງຊະນິດ ແລະ ຢາປາບສັດຕູພືດ ໃນການຄ້າສາກົນ (Rotterdam);
8. ອະນຸສັນຍາ ບາເຊວ ດ້ານການຄວບຄຸມການເຄື່ອນຍ້າຍຂ້າມຊາຍແດນຂອງສິ່ງເສດເຫຼືອອັນຕະລາຍ ແລະ ການກຳຈັດຖິ້ມ (Basel);
9. ຂໍ້ຕົກລົງປາຣີ ດ້ານການປ່ຽນແປງດິນຟ້າອາກາດ (Paris Agreement);

10. ຂໍ້ຕົກລົງແມ່ນ້ຳຂອງດ້ານການຮ່ວມມື ສຳລັບການພັດທະນາ ອ່າງແມ່ນ້ຳຂອງແບບຍືນຍົງ (Mekong Agreement 1995); ແລະ ການຮ່ວມມືອາຊຽນ ສຳລັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

## 1.5 ການສັງເກດ-ຕີລາຄາ

ຜ່ານການເຄື່ອນໄຫວຂອງ ກປສ ນັບແຕ່ປີ 2005 ເປັນຕົ້ນມາ ພວກເຮົາສາມາດຕີລາຄາ ດ້ານຕັ້ງໜ້າ, ດ້ານອ່ອນ ແລະ ຂໍ້ຄົງຄ້າງ, ກາລະໂອກາດ ແລະ ຄວາມສ່ຽງ ດັ່ງມີລາຍລະອຽດລຸ່ມນີ້:

**ກ. ດ້ານຕັ້ງໜ້າ**

1. ກປສ ມີຖານະທາງດ້ານກົດໝາຍວ່າດ້ວຍ ໂດຍສະເພາະ ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ແລະ ດຳລັດວ່າດ້ວຍ ກປສ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງ;
2. ກປສ ມີ ໂຄງປະກອບການຈັດຕັ້ງທີ່ເຂັ້ມແຂງ ປະກອບດ້ວຍສະພາບໍລິຫານ, ຄະນະວິຊາການ ແລະ ຫ້ອງການ ກປສ;
3. ກປສ ໄດ້ຮັບການສະໜັບສະໜູນຈາກລັດຖະບານ, ການສະໜັບສະໜູນທາງດ້ານວິຊາການ, ການຄຸ້ມຄອງ ບໍລິຫານ ແລະ ການເງິນຈາກ ທະນາຄານໂລກ (ຄສລ2) ແລະ ທະນາຄານພັດທະນາອາຊີ ໂດຍຜ່ານລັດຖະບານ;
4. ກປສ ມີສິດ ແລະ ມີເງື່ອນໄຂ ລະດົມແຫຼ່ງທຶນອື່ນ ເປັນຕົ້ນ ຈາກໂຄງການລົງທຶນ ແລະ ກິດຈະການພັດທະນາ ຕ່າງໆ; ແລະ
5. ກປສ ມີລະບົບຄຸ້ມຄອງ-ບໍລິຫານ ທີ່ເຂັ້ມແຂງ ເຊິ່ງມີຄູ່ມືຄຸ້ມຄອງ-ບໍລິຫານໂຄງການ ເປັນບ່ອນອີງໃນການເຄື່ອນໄຫວ ພ້ອມທັງມີພະນັກງານທີ່ມີປະສົບການສູງ.

**ຂ. ດ້ານອ່ອນ ແລະ ຂໍ້ຄົງຄ້າງ**

1. ກປສ ຍັງຂາດ ວິໄສທັດ ແລະ ຍຸດທະສາດໃນການຫັນເອົາ ກປສ ເປັນກົນໄກການເງິນທີ່ຍືນຍົງ ສຳລັບວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ;
2. ພະນັກງານສ່ວນຫຼາຍ ປະຕິບັດວຽກງານ ຕາມກອບໜ້າວຽກໃນສັນຍາຂອງໃຜລາວ ທີ່ບໍ່ມີລັກສະນະເປັນທີມງານ;
3. ການຫັນພະນັກງານເຂົ້າສູ່ລະບົບຖາວອນ ປະເຊີນໜ້າກັບຄວາມຫຍຸ້ງຍາກ ຍ້ອນຍັງມີສະພາບການເຂົ້າ-ອອກຂອງພະນັກງານ;
4. ການລະດົມທຶນ ຈາກການປະກອບສ່ວນປະຕິບັດພັນທະຕາມສັນຍາ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ກັບ ໂຄງການລົງທຶນ ແລະ ກິດຈະການພັດທະນາ ຍັງບໍ່ສາມາດບັນລຸໄດ້ຕາມແຜນການ;
5. ຂະບວນການໂຄສະນາເຜີຍແຜ່ ບໍ່ທັນມີລະບົບທີ່ກວ້າງຂວາງ ແລະ ຕໍ່ເນື່ອງ.

**ຄ. ກາລະໂອກາດ**

1. ເມື່ອ ກປສ ມີລະບົບການຄຸ້ມຄອງ-ບໍລິຫານ ທີ່ມີປະສິດທິຜົນ, ຍືນຍົງ ແລະ ໂປ່ງໃສ, ກປສ ຈະມີກາລະໂອກາດທີ່ດີໃນການຍາດແຍ່ງທຶນຮອນ ຈາກ 8 ແຫຼ່ງທຶນທີ່ລະບຸໄວ້ ໃນດຳລັດ ກປສ;
2. ກປສ ມີໂອກາດທີ່ດີ ໃນການຫັນເປັນຄູ່ຮ່ວມງານກັບຂະແໜງການລັດທີ່ກ່ຽວຂ້ອງ, ຄູ່ຮ່ວມພັດທະນາ, ຜູ້ພັດທະນາທັງພາກລັດ ແລະ ເອກະຊົນທັງພາຍໃນ ແລະ ຕ່າງປະເທດ ເພື່ອເພີ່ມທະວີການລະດົມທຶນ;

3. ກປສ ມີກາລະໂອກາດໃນການພັດທະນາຕົນເອງໃຫ້ກາຍເປັນສະຖາບັນການເງິນທີ່ໝັ້ນຄົງ ປະກອບສ່ວນໃຫ້ວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ.

**ງ. ຄວາມສ່ຽງ**

1. ຍັງບໍ່ມີນິຕິກຳເປັນບ່ອນອີງສະເພາະໃນການປະກອບສ່ວນປະຕິບັດພັນທະຕາມສັນຍາ ລະຫວ່າງ ລັດຖະບານແຫ່ງ ສປປ ລາວ ກັບ ໂຄງການລົງທຶນ ແລະ ກິດຈະການພັດທະນາຕ່າງໆ ເຮົາຈະບໍ່ສາມາດບັນລຸໄດ້ຕາມແຜນການ;
2. ການຍົກລະດັບການຈັດຕັ້ງໃຫ້ເຂັ້ມແຂງ ແລະ ມີພະນັກງານປະສົບການສູງ ໃນການຫັນເປັນໜຶ່ງກອງທຶນ ໜຶ່ງລະບົບ ຍັງຊັກຊ້າ;
3. ການຂຸດຄົ້ນແຫຼ່ງທຶນ ແລະ ເຊື່ອມໂຍງກັບ ເຄືອຂ່າຍໃນລະດັບຊາດ, ອະນຸພາກພື້ນ ແລະ ສາກົນ ບໍ່ທັນໄດ້ດີ.

## 1.6 ສະຫຼຸບລວມ

ໃນການເຄື່ອນໄຫວນັບແຕ່ປີ 2005 ເປັນຕົ້ນມາ ພວກເຮົາ ສາມາດຖອດຖອນບົດຮຽນຈາກການສັງເກດຕີລາຄາ ດັ່ງທີ່ລະບຸໃນຂໍ້ 1.6 ຂ້າງເທິງນັ້ນ ເພື່ອເພີ່ມທະວີການແກ້ໄຂໃນຕໍ່ໜ້າໄດ້ດັ່ງນີ້:

***ດ້ານ 1:*** ເພີ່ມທະວີສ້າງຄວາມເຂັ້ມແຂງດ້ານການຈັດຕັ້ງ, ຍົກລະດັບພະນັກງານຢ່າງຕໍ່ເນື່ອງໃຫ້ມີປະສົບປະການສູງ ເປັນທີ່ຍອມຮັບໄດ້ທັງພາຍໃນ ແລະ ສາກົນ ພ້ອມທັງມີພະນັກງານພຽງພໍ ທີ່ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ; ບົດບາດໜ້າທີ່ ເປັນກົນໄກການເງິນ ຂອງກປສ ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງມີປະສິດທິຜົນ ແລະ ມີທຶນສະສົມ ຂອງຕົນເອງ ເປັນສ່ວນໃຫຍ່; ເພີ່ມທະວີບົດບາດ ໃນການປະກອບສ່ວນຢ່າງເໝາະສົມເຂົ້າໃນວຽກງານ ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ, ລວມທັງ ການປະກອບສ່ວນເຂົ້າໃສ່ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໄປຕາມທິດສີຂຽວ ແລະ ຍືນຍົງ.

***ດ້ານ 2:*** ກປສ ຕ້ອງເສີມຂະຫຍາຍດ້ານຕັ້ງໜ້າ, ແກ້ໄຂຈຸດອ່ອນ, ຂໍ້ຄົງຄ້າງ ແລະ ເພີ່ມທະວີການຈັດຕັ້ງປະຕິບັດບັນດາບົດຮຽນສຳຄັນທີ່ຖອດຖອນໄດ້ໃນຜ່ານມາ ໂດຍສະເພາະວຽກງານຄຸ້ມຄອງ-ບໍລິຫານ, ຄຸ້ມຄອງໂຄງການ, ຈັດຊື້-ຈັດຈ້າງ ແລະ ຄຸ້ມຄອງການເງິນ ທີ່ຕິດພັນກັບການຈັດຕັ້ງປະຕິບັດ ບັນດາກົດໝາຍວ່າດ້ວຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ, ການຫັນເປັນຄູ່ຮ່ວມງານກັບຂະແໜງການທີ່ກ່ຽວຂ້ອງ ພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ແນໃສ່ຮັບປະກັນການລະດົມທຶນ, ການປະກອບສ່ວນປະຕິບັດພັນທະຕ່າງໆ ໃຫ້ບັນລຸຕາມແຜນການ.

***ດ້ານ 3:*** ກປສ ຕ້ອງເສີມຂະຫຍາຍບົດຮຽນໃນການສະໜອງທຶນໃຫ້ແກ່ໂຄງການຂອງບຸກຄົນ, ຫົວໜ່ວຍທຸລະກິດ, ອົງການ ຈັດຕັ້ງຂອງລັດ ຫຼື ສັງຄົມ ດ້ວຍຮູບແບບໃຫ້ການຊ່ວຍເຫຼືອລ້າ, ເງິນກູ້ອັດຕາດອກເບ້ຍຕໍ່າ, ການຖົມຊຸມອັດຕາດອກເບ້ຍ ຫຼື ເປັນການສະໜອງທຶນແບບປະສົມປະສານກັນ ໂດຍໃຫ້ມີລະບົບທີ່ຄົບຊຸດ ໃນການຕິດຕາມກວດກາດ້ານການເງິນ ຖືກກັບຈຸດປະສົງຂອງ ກປສ; ຕາມພາລະບົດບາດ ແລະ ເພີ່ມທະວີການສະໜອງທຶນໃຫ້ແກ່ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມແບບຍືນຍົງ ປະກອບສ່ວນຢ່າງຕັ້ງໜ້າໃຫ້ແກ່ຂະບວນການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃຫ້ໄປຕາມທິດສີຂຽວ ແລະ ຍືນຍົງ.

# *ພາກທີ II  ວິໄສທັດ ຮອດປີ 2030, ຍຸດທະສາດ ຮອດປີ 2025 ຂອງ ກປສ*

ວິໄສທັດ ຮອດປີ 2030, ຍຸດທະສາດ ຮອດປີ 2025 ຂອງ ກປສ ໄດ້ຮັບການພັດທະນາຂຶ້ນ ບົນພື້ນຖານ ມະຕິຂອງກອງປະຊຸມໃຫຍ່ ພັກປະຊາຊົນປະຕິວັດລາວ ຄັ້ງທີ X, ວິໄສທັດ ຮອດປີ 2030 ແລະ ຍຸດທະສາດ ຮອດປີ 2025 ດ້ານການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ຂອງຂະແໜງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງການ ອື່ນໆ ທີ່ກ່ຽວຂ້ອງ ເພື່ອບັນລຸຕາມທິດສີຂຽວ ແລະ ຍືນຍົງ ຕິດພັນກັບການຮ່ວມມື ແລະ ການເຊື່ອມໂຍງອະນຸພາກພື້ນ, ພາກພື້ນ ແລະ ສາກົນ.

## 2.1 ວິໄສທັດ ຮອດປີ 2030 ຂອງ ກປສ

### 2.1.1 ວິໄສທັດ

ເມື່ອຮອດປີ 2030 *"ກປສ ເປັນສະຖາບັນການເງິນ ທີ່ໝັ້ນຄົງ, ມີຄວາມເຂັ້ມແຂງ ທາງດ້ານການຈັດຕັ້ງ ແລະ ບຸກຄະລາກອນ ໄດ້ມາດຕະຖານສາກົນ, ມີກົນໄກຄຸ້ມຄອງ-ບໍລິຫານຫ້ອງການ, ການເງິນ, ຄຸ້ມຄອງໂຄງການ, ຈັດຊື້-ຈັດຈ້າງ, ການລະດົມທຶນ ແລະ ສະໜອງທຶນ ທີ່ມີປະສິດທິຜົນ ແລະ ແບບຍືນຍົງ ເຂົ້າໃນວຽກງານ ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ແນໃສ່ການປະກອບສ່ວນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃຫ້ໄປຕາມທິດສີຂຽວ ແລະ ຍືນຍົງ".*

### 2.1.2 ພາລະໜ້າທີ່ຂອງ ກປສ

- ພາຍໃນປີ 2020: ສຳເລັດການຈັດຕັ້ງປະຕິບັດ ຄສລ2 ດ້ວຍຜົນສຳເລັດ ຕາມຈຸດປະສົງເປົ້າໝາຍທີ່ກຳນົດໄວ້ ລວມທັງ ສກປສ ຮັບຮອງເອົາ ຜົນຂອງການສ້າງ "ກປສ ເປັນໜຶ່ງດຽວ" ແລະ ແຜນການ 5 ປີ ຂອງ ກປສ ສຳລັບປີ 2021-2025 ລວມທັງການກະກຽມ ບັນດາໂຄງການໃໝ່;
- ພາຍໃນປີ 2025: ສຳເລັດການຈັດຕັ້ງປະຕິບັດ ແຜນ 5 ປີ 2021-2025 (ບັນດາໂຄງການໃໝ່) ດ້ວຍຜົນສຳເລັດສູງ ແລະ ກະກຽມແຜນ 5 ປີ ຂອງ ກປສ ສຳລັບ 2026-2030;
- ພາຍໃນປີ 2030: ທົບທວນ/ສ້າງ ວິໄສທັດ ແລະ ຍຸດທະສາດ ຂອງ ກປສ ສຳລັບ ໄລຍະປີ 2031-2045 ແລະ ກະກຽມ ແຜນ 5 ປີ ກປສ ສຳລັບ ປີ 2030-2035 ລວມທັງການກະກຽມ ບັນດາໂຄງການໃໝ່ ຫຼື ແຜນງານໃໝ່.

### 2.1.3 ເປົ້າໝາຍຂອງ ກປສ

ເປົ້າໝາຍ ຂອງ ກປສ ໄດ້ແບ່ງອອກເປັນ ສາມເປົ້າໝາຍສະເພາະເພື່ອໃຫ້ບັນລຸວິໄສທັດ ຮອດປີ 2030 ດັ່ງຕໍ່ໄປນີ້:

- ➢ ***ເປົ້າໝາຍ 1:*** ມີການຈັດຕັ້ງທີ່ເຂັ້ມແຂງ ດຳເນີນໂດຍພະນັກງານປະສິບການສູງ ເພື່ອຮັບປະກັນ ໃຫ້ບັນລຸຕາມຫຼັກການ ຂອງ ກປສ.
- ➢ ***ເປົ້າໝາຍ 2:*** ມີແຫຼ່ງລາຍຮັບທີ່ຍືນຍົງ ແລະ ເຊື່ອມໂຍງກັບ ເຄືອຂ່າຍໃນລະດັບຊາດ, ອະນຸພາກພື້ນ ແລະ ສາກົນ.
- ➢ ***ເປົ້າໝາຍ 3:*** ສະໜອງທຶນ ຜ່ານຮ່ວງທຶນ ບົນພື້ນຖານຫຼັກການຂອງ ກປສ.

### 2.1.4. ຫຼັກການຂອງ ກປສ

ເພື່ອໃຫ້ບັນລຸ ດັ່ງທີ່ກ່າວມາຂ້າງເທິງ, ກປສ ຈະຕ້ອງດຳເນີນງານ ດ້ວຍກ້ອນທຶນລວມ ພາຍໃຕ້ກົນໄກ ການສະ ໜອງ ທຶນຂອງຮ່ວງທຶນຕ່າງໆ, ພາຍໃຕ້ກົດໝາຍວ່າດ້ວຍຂອງ ສປປ ລາວ, ດຳລັດວ່າດ້ວຍ ກປສ, ລະບຽບການຄຸ້ມຄອງຂອງ ກປສ ແລະ ຕາມຫຼັກການການດຳເນີນງານດັ່ງຕໍ່ໄປນີ້:

- ➢ **ຄວາມເປັນເຈົ້າການ**

ການດຳເນີນງານຂອງ ກປສ ມີພັນທະຕ້ອງບັນລຸຜົນສຳເລັດ, ມີຄວາມຮູ້ ແລະ ຄວາມເຂົ້າໃຈ ໃນລາຍລະອຽດ, ມີຄວາມຮັບຜິດຊອບ, ມີລະບຽບວິໄນ ແລະ ມີຈຸດສຸມ ໃນການປັບປຸງໝາກຜົນຂອງໂຄງການ.

- **ຄວາມຮັບຜິດຊອບ**

  ກປສ ສົ່ງເສີມກິດຈະກຳຄວາມຮັບຜິດຊອບ ເຂົ້າສູ່ວຽກງານປະຈຳວັນ ໂດຍການສ້າງກົນໄກ ຕຳໜົດຕິຊົມໃນແຕ່ລະໄລຍະ ແລະ ມີການປະເມີນຜົນສຳເລັດ ໃຫ້ບັນລຸພາລະໜ້າທີ່.

- **ຄວາມໂປ່ງໃສ**

  ການດຳເນີນງານຂອງ ກປສ ຕ້ອງມີຄວາມໂປ່ງໃສ ແລະ ສະໜອງຂໍ້ມູນ-ຂ່າວສານ ກ່ຽວກັບ ການດຳເນີນງານໃຫ້ແກ່ສາທາລະນະ ຕາມຄວາມຈຳເປັນ.

- **ປະສິດທິຜົນ**

  ການດຳເນີນງານຂອງ ກປສ ຕ້ອງທະລຸເປົ້າໝາຍທີ່ກຳນົດໄວ້ ແລະ ມີປະສິດທິພາບ (ມີຜົນຕອບແທນຈາກການລົງທຶນສູງ ແລະ ຄຸ້ມຄ່າ).

## 2.2 ຍຸດທະສາດ ຮອດປີ 2025

### 2.2.1 ທິດທາງລວມ

ຍຸດທະສາດ ຮອດປີ 2025 ຂອງ ກປສ ໄດ້ວາງທິດທາງລວມ ແມ່ນເພື່ອ ***"ສ້າງຄວາມເຂັ້ມແຂງ ດ້ານການຈັດຕັ້ງ ແລະ ບຸກຄະລາກອນ, ສ້າງຄວາມເຂັ້ມແຂງ ທາງດ້ານກົນໄກການເງິນ ທີ່ຍືນຍົງ ເພື່ອປະຕິບັດພາລະບົດບາດ ໃນການລະດົມທຶນ ແລະ ສະໜອງທຶນ ໃຫ້ແກ່ວຽກງານ ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ ປະກອບສ່ວນ ຢ່າງຕັ້ງໜ້າ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຕາມທິດສີຂຽວ ແລະ ຍືນຍົງ ໃຫ້ປະກົດຜົນເປັນຈິງ ໄປພ້ອມໆກັບການ ເຊື່ອມໂຍງເຂົ້າກັບເຄືອຂ່າຍ ຂອງຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງທັງໝົດ".***

### 2.2.2 ເປົ້າໝາຍ

ເພື່ອບັນລຸ ຍຸດທະສາດ ຂອງ ກປສ ພາຍໃນປີ 2025, ກປສ ຕ້ອງບັນລຸ ເປົ້າໝາຍຍຸດທະສາດ ດັ່ງຕໍ່ໄປນີ້:

1. ການຈັດຕັ້ງຂອງ ກປສ ມີຄວາມເຂັ້ມແຂງ ເປັນທີ່ຍອມຮັບໄດ້ທັງພາຍໃນ ແລະ ສາກົນ ພ້ອມທັງມີພະນັກງານພຽງພໍ ທີ່ຮັບປະກັນທາງດ້ານຄຸນນະພາບ ແລະ ປະລິມານ;
2. ບົດບາດໜ້າທີ່ ເປັນກົນໄກການເງິນ ຂອງ ກປສ ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງມີປະສິດທິຜົນ ແລະ ມີທຶນສະສົມ ຂອງຕົນເອງ ເປັນສ່ວນໃຫຍ່;
3. ເພີ່ມທະວີບົດບາດ ໃນການປະກອບສ່ວນຢ່າງເໝາະສົມ ເຂົ້າໃນວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ, ລວມທັງ ການປະກອບສ່ວນ ເຂົ້າໃສ່ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໄປຕາມທິດສີຂຽວ ແລະ ຍືນຍົງ.

### 2.2.3 ຍຸດທະສາດ ຮອດປີ 2025

ແຕ່ນີ້ ຮອດປີ 2025 ກປສ ໄດ້ວາງ ຍຸດທະສາດ ຂອງຕົນ ດັ່ງນີ້:

- ຍຸດທະສາດ 1: ປັບປຸງດ້ານການຈັດຕັ້ງ ແລະ ຍົກຂີດຄວາມສາມາດໃນການຄຸ້ມຄອງ
- ຍຸດທະສາດ 2: ຍົກຂີດຄວາມສາມາດ ດ້ານບຸກຄະລາກອນ
- ຍຸດທະສາດ 3: ປັບປຸງ ກົນໄກ ລະດົມທຶນ ກປສ ແລະ ສະໜອງທຶນ ທີ່ຍືນຍົງ
- ຍຸດທະສາດ 4: ປັບປຸງຂອດການຮ່ວມມື ແລະ ການຫັນເປັນຄູ່ຮ່ວມງານ

### 2.2.4 ຜົນໄດ້ຮັບ ຂອງຍຸດທະສາດ

ຜົນໄດ້ຮັບຈາກແຕ່ລະຍຸດທະສາດ ມີດັ່ງຕໍ່ໄປນີ້:

**ຍຸດທະສາດ 1:** ປັບປຸງການຈັດຕັ້ງ ແລະ ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງ

- ຜົນໄດ້ຮັບ 1: ມີໂຄງປະກອບການຈັດຕັ້ງ ແລະ ພາລະບົດບາດ ທີ່ຈະແຈ້ງ ແລະ ເໝາະສົມ
- ຜົນໄດ້ຮັບ 2: ມີລະບົບການຄຸ້ມຄອງ-ບໍລິຫານ ທີ່ມີປະສິດທິຜົນ ຕາມ 8 ດັດສະນີຄວາມສາມາດ
- ຜົນໄດ້ຮັບ 3: ມີລະບຽບການ ແລະ ຄູ່ມືດຳເນີນງານ ທີ່ຄົບຊຸດ ແລະ ມີປະສິດທິຜົນ
- ຜົນໄດ້ຮັບ 4: ມີລະບົບການບໍລິການ ດ້ານການເງິນ ທີ່ມີປະສິດທິຜົນ

**ຍຸດທະສາດ 2:** ສ້າງຄວາມເຂັ້ມແຂງ ດ້ານບຸກຄະລາກອນ

- ຜົນໄດ້ຮັບ 1: ມີຄວາມພ້ອມ ທັງທາງດ້ານປະລິມານ ແລະ ຄຸນນະພາບ
- ຜົນໄດ້ຮັບ 2: ມີນະໂຍບາຍ ດ້ານບຸກຄະລາກອນ ທີ່ເໝາະສົມ
- ຜົນໄດ້ຮັບ 3: ຈັດຕັ້ງປະຕິບັດ ແຜນພັດທະນາ ຊັບພະຍາກອນມະນຸດ

**ຍຸດທະສາດ 3:** ປັບປຸງ ກົນໄກລະດົມທຶນ ກປສ  ແລະ ສະໜອງທຶນ ທີ່ຍືນຍົງ

- ຜົນໄດ້ຮັບ 1: ມີແຜນການລະດົມທຶນ ແລະ ການສື່ສານ
- ຜົນໄດ້ຮັບ 2: ມີແຜນການສະໜອງທຶນຕາມ 5 ຮ່ວງທຶນ
- ຜົນໄດ້ຮັບ 3: ມີທຶນເພີ່ມ ຈາກແຫຼ່ງທຶນຕ່າງໆ ຕາມມາດຕາ 5 ຂອງດຳລັດ ກປສ

**ຍຸດທະສາດ 4:** ປັບປຸງ ຂອດການຮ່ວມມື ແລະ ການຫັນເປັນຄູ່ຮ່ວມງານ

- ຜົນໄດ້ຮັບ 1: ມີເຄືອຂ່າຍ ການຮ່ວມມື ແລະ ເຊື່ອມໂຍງ ພາຍໃນ ກັບຂະແໜງການທີ່ກ່ຽວຂ້ອງ ພາກລັດ ແລະ ພາກເອກກະຊົນ, ຜູ້ພັດທະນາ ທັງໃນສູນກາງ ແລະ ທ້ອງຖິ່ນ;
- ຜົນໄດ້ຮັບ 2: ມີເຄືອຂ່າຍ ການຮ່ວມມື ແລະ ເຊື່ອມໂຍງ ກັບຄູ່ຮ່ວມພັດທະນາ ໃນອະນຸພາກພື້ນ, ພາກພື້ນ ແລະ ສາກົນ.
- ຜົນໄດ້ຮັບ 3: ມີສື່ສານມວນຊົນ ແລະ ວາລະສານ ກ່ຽວກັບຜົນສຳເລັດ ໃນການເຄື່ອນໄຫວ ຂອງ ກປສ.

## ວິໄສທັດ ກປສ 2030

ເມື່ອຮອດປີ 2030 **"ກປສ ເປັນສະຖາບັນການເງິນ ທີ່ໝັ້ນຄົງ, ມີຄວາມເຂັ້ມແຂງ ທາງດ້ານການຈັດຕັ້ງ ແລະ ບຸກຄະລາກອນ ໄດ້ມາດຕະຖານສາກົນ, ມີກົນໄກຄຸ້ມຄອງ-ບໍລິຫານຫ້ອງການ, ການເງິນ, ຄຸ້ມຄອງໂຄງການ, ຈັດຊື້-ຈັດຈ້າງ, ການລະດົມທຶນ ແລະ ສະໜອງທຶນ ທີ່ມີປະສິດທິຜົນ ແລະ ຍືນຍົງ ເຂົ້າໃນວຽກງານ ການຄຸ້ມຄອງ ຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ແນໃສ່ການປະກອບສ່ວນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃຫ້ໄປຕາມທິດສີຂຽວ ແລະ ຍືນຍົງ".**

### ແຜນຍຸດທະສາດ ຮອດປີ 2025

**ເປົ້າໝາຍ 1:** ການຈັດຕັ້ງເຂັ້ມແຂງດຳເນີນໂດຍພະນັກງານ ມີປະສົບການສູງເພື່ອຮັບປະກັນໃຫ້ ບັນລຸຕາມຫຼັກການ ກປສ.

**ເປົ້າໝາຍ 2:** ມີແຫຼ່ງລາຍຮັບທີ່ຍືນຍົງ ແລະ ເຊື່ອມໂຍງກັບເຄືອຂ່າຍລະດັບຊາດ,ອະນຸພາກພື້ນ ແລະ ສາກົນ.

**ເປົ້າໝາຍ 3:** ສະໜອງທຶນຜ່ານຊ່ອງທຶນ ບົນພື້ນຖານຫຼັກການຂອງ ກປສ.

**ຍຸດທະສາດ 1:** ປັບປຸງດ້ານການຈັດຕັ້ງ ແລະ ຍົກຂີດຄວາມສາມາດໃນການຄຸ້ມຄອງ.

**ຍຸດທະສາດ 2:** ຍົກຂີດຄວາມສາມາດ ດ້ານບຸກຄະລາກອນ.

**ຍຸດທະສາດ 3:** ປັບປຸງ ກົນໄກ ລະດົມທຶນ ກປສ ແລະ ສະໜອງທຶນທີ່ຍືນຍົງ.

**ຍຸດທະສາດ 4:** ປັບປຸງຂອດການຮ່ວມມື ແລະ ການຫັນເປັນຄູ່ຮ່ວມງານ.

### ແຜນການລະດົມທຶນ ແລະ ການສື່ສານ ຮອດປີ 2020

**ແຫຼ່ງລາຍຮັບງົບປະມານ ຂອງ ກປສ**

- ງົບປະມານລັດ
- ສັນຍາສຳປະທານ
- ການໃຫ້ທຶນຊ່ວຍເຫຼືອ
- ກຸ່ມ/ນິຕິບຸກຄົນ
- ຄ່າປັບໃໝຄ່າເສຍຫາຍ
- ຄ່າຟື້ນຟູສິ່ງແວດລ້ອມ
- ຄ່າບໍລິການສິ່ງແວດລ້ອມ
- ຄ່າປັບໃໝ

### ແຜນການສະໜອງທຶນ ຮອດປີ 2020

- ຮ່ວງນະໂຍບາຍ
- ຮ່ວງຊີວະນາໆພັນ
- ຮ່ວງຄວບຄຸມມົນລະພິດ
- ຮ່ວງການຄຸ້ມຄອງແຫຼ່ງນໍ້າ
- ຮ່ວງການຄຸ້ມຄອງທີ່ດິນ
- ເງິນກູ້ຢືມ

**ຜູ້ໄດ້ຮັບຜົນປະໂຫຍດ ແລະ ໜ່ວຍງານຈັດຕັ້ງປະຕິບັດໂຄງການ**

- ກປສ
- ລັດຖະບານ
- ເອກະຊົນ
- ສະຖາບັນການສຶກສາ
- ອົງການຈັດຕັ້ງທາງສັງຄົມ
- ກຸ່ມ/ນິຕິບຸກຄົນ
- ອົງການບໍ່ຂຶ້ນກັບລັດຖະບານ

**ຮູບພາບທີ 2:** ແຜນຜັງກ່ຽວກັບວິໄສທັດ, ຍຸດທະສາດ ແລະ ແຜນການ ຂອງ ກປສ




**ຮູບພາບທີ 3: ແຜນຜັງກ່ຽວກັບວິໄສທັດ, ຍຸດທະສາດ ແລະ ແຜນການ ຂອງ ກປສ**

## *ພາກທີ III ມາດຕະການຈັດຕັ້ງປະຕິບັດ*

ເພື່ອຮັບປະກັນ ການຈັດຕັ້ງປະຕິບັດ ວິໄສທັດ ແລະ ຍຸດທະສາດ ສະບັບນີ້ ຢ່າງມີປະສິດທິພາບ ແລະ ປະສິດທິຜົນນັ້ນ, ກປສ ຕ້ອງຈັດຕັ້ງປະຕິບັດມາດຕະການຈັດຕັ້ງປະຕິບັດ ດັ່ງນີ້:

1. ຫ້ອງການ ກປສ ຫັນເປັນອັນລະອຽດໃນແຕ່ລະດ້ານ ຄື: ສ້າງແຜນການສະໜອງທຶນ ຮອດປີ 2020 , ແຜນການລະດົມທຶນ ແລະ ການສື່ສານ ຮອດປີ 2020, ສ້າງຄູ່ມືຄຸ້ມຄອງພະນັກງານຂອງ ກປສ ສືບຕໍ່ສ້າງ ແລະ ປັບປຸງ ໃນ 5 ປີ ຕໍ່ໄປ;
2. ເພີ່ມທະວີການຄົ້ນຄວ້າເຊື່ອມຊຶມ ພ້ອມທັງໂຄສະນາເຜີຍແຜ່ ແລະ ສ້າງຈິດສຳນຶກ ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ, ໃນສັງຄົມ ໃຫ້ເຂົ້າໃຈ ກ່ຽວກັບ ເອກະສານເຫຼົ່ານີ້;
3. ເພີ່ມທະວີການປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ໃນຂົງເຂດວຽກງານທີ່ກ່ຽວຂ້ອງ ກັບ ກປສ ;
4. ສ້າງກົນໄກໃນການຈັດຕັ້ງປະຕິບັດ, ການຕິດຕາມກວດກາ ແລະ ການປະເມີນຜົນ ການຈັດຕັ້ງປະຕິບັດເອກະສານດັ່ງກ່າວ;
5. ປັບປຸງ ຍົກລະດັບລະບົບການຈັດຕັ້ງ ໃຫ້ຄົບຊຸດຮອບດ້ານ ແລະ ສ້າງຄວາມເຂັ້ມແຂງ ດ້ານບຸກຄະລາກອນ ເພື່ອຮັບປະກັນ ການເຄື່ອນໄຫວ ຈັດຕັ້ງປະຕິບັດ ເອກະສານດັ່ງກ່າວໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

## ເອກະສານອ້າງອີງ


1. ມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ສປປ ລາວ;
2. ນະໂຍບາຍ ແຫ່ງຊາດ ວ່າດ້ວຍການປະຢັດ ແລະ ອະນຸລັກພະລັງງານ ສະບັບເລກທີ 01/ພບ, ລົງວັນທີ 04/07/2016;
3. ນະໂຍບາຍ ຂອງ ສປປ ລາວ ກ່ຽວກັບ ການພັດທະນາ ຂະແໜງ ໄຟຟ້ານໍ້າຕົກ ແບບຍືນຍົງ ທາງດ້ານ ສິ່ງແວດລ້ອມ ແລະ ສັງຄົມ ສະບັບເລກທີ 561/ຄຜທ, ລົງວັນທີ 04/11/2014;
4. ວິໄສທັດ ຮອດປີ 2030, ຍຸດທະສາດ 10 ປີ (2016-2025) ດ້ານການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ;
5. ວິໄສທັດ ຮອດປີ 2030, ຍຸດທະສາດ 10 ປີ (2016-2025) ຂອງຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຂອງຂະແໜງການອື່ນໆ;
6. ຍຸດທະສາດການຂະຫຍາຍຕົວແຫ່ງຊາດ ແລະ ການຫຼຸດຜ່ອນຄວາມທຸກຍາກ*(NGPES)*;
7. ຍຸດທະສາດສິ່ງແວດລ້ອມແຫ່ງຊາດ **2011 – 2020**;
8. ຍຸດທະສາດການພັດທະນາກະສິກຳ **2011 - 2020 (2010)**;
9. ຍຸດທະສາດການປ່ຽນແປງດິນຟ້າອາກາດ **(2010)**;
10. ຍຸດທະສາດປ່າໄມ້ ຮອດປີ **2020 (2005)**;
11. ຮ່າງນະໂຍບາຍ ແລະ ຍຸດທະສາດ ຊັບພະຍາກອນນໍ້າ **(2013);**
12. ຍຸດທະສາດຊີວະນາໆພັນແຫ່ງຊາດ ຮອດປີ **2020** ແຜນດຳເນີນງານ ປີ **2010 (2004)**;
13. ຍຸດທະສາດການພັດທະນາພະລັງງານທົດແທນ ໃນ ສປປ ລາວ **(2011)**;
14. ຍຸດທະສາດພະລັງງານ ແລະ ການຂຸດຄົ້ນບໍ່ແຮ່ ແຫ່ງຊາດ ຮອດປີ **2020**;
15. ມະຕິຂອງຄະນະບໍລິຫານງານສູນກາງພັກ ວ່າດ້ວຍການເພີ່ມທະວີວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ ໃນໄລຍະໃໝ່ ເລກທີ 26/ຄບສພ, ລົງວັນທີ 3/8/2017*;*
16. ຍຸດທະສາດການທ່ອງທ່ຽວແຫ່ງຊາດ ຮອດປີ **2020**;
17. ບົດລາຍງານກໍລະນີສຶກສາ: ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ໃນ ສປປ ລາວ, ອົງການສະຫະປະຊາຊາດ ເພື່ອການພັດທະນາ ແລະ ກປສ.
18. ບົດລາຍງານການສິ້ນສຸດການຈັດຕັ້ງປະຕິບັດ ແລະ ຜົນໄດ້ຮັບ, ທະນາຄານໂລກ, ພະຈິກ, 2013
19. ບົດສະຫຼຸບການຈັດຕັ້ງປະຕິບັດແຜນການ ສົກປີ 2011 - 2012 ແລະ ທິດທາງແຜນການ ສົກປີ 2012 - 2013 ຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ **(2012);**
20. ບົດສະຫຼຸບການຈັດຕັ້ງປະຕິບັດແຜນການ ສົກປີ 2012 - 2013 ແລະ ທິດທາງແຜນການ ສົກປີ 2013 - 2014 ຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ **(2013);**
21. ບົດສະຫຼຸບປະເມີນຜົນກາງສະໄໝ ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຄັ້ງທີ 7 ສົກປີ 2011 – 2015 ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ **(2013);**
22. ບົດລາຍງານການຈັດຕັ້ງປະຕິບັດເປົ້າໝາຍສະຫັດສະຫວັດທີ 7 ຮັບປະກັນຄວາມຍືນຍົງດ້ານສິ່ງແວດລ້ອມ ຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ **(2013);**
23. ແຜນດຳເນີນງານສິ່ງແວດລ້ອມ ແຫ່ງຊາດ ສົກປີ 2011 – 2015 (2012);
24. ແຜນດຳເນີນງານການພັດທະນາກະສິກຳແຫ່ງຊາດ ຮອດປີ **2015.**




**ລວມທັງຫມົດທົ່ວປະເທດ 169 ໂຄງການ (ກປສ 121, ຄສລ2 48)**

ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ), ເຂດນາໄຮ່ດຽວ, ຕູ້ປນ: 7647, ຕຶກ100 ກຊສ-ຊັ້ນ 2, ຖະໜົນສີດໍາດວນ
ໂທລະສັບ: 856-21 252 739, ແຟັກ: 856-21 251 741 ເວັບໄຊ໌ https://laoepf.org.la